# ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ

# Economic Disputes Resolution in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 5

## ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

## Cost of economic disputes resolving

### I. ຄວາມຮັບຮູ້ກ່ຽວກັບຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

#### 1. ຄວາມໝາຍຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຄ່າໃຊ້ຈ່າຍໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນພັນທະຂອງຄູ່ກໍລະນີທີ່ຕ້ອງຮັບຜິດຊອບຈ່າຍ ເພື່ອນຳໃຊ້ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງ ທີ່ຄູ່ກໍລະນີນຳມາວາງໄວ້ຢູ່ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກ່ອນການດຳເນີນການແກ້ໄຂຂໍ້ຂັດແຍ່ງ.

ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງເກັບຄ່າໃຊ້ຈ່າຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ການເກັບຄ່າໃຊ້ຈ່າຍນັ້ນ ຕ້ອງປະຕິບັດຕາມລະບຽບການກ່ຽວກັບການເກັບຄ່າທຳນຽມ ແລະ ຄ່າບໍລິການ ທີ່ລັດປະກາດໃຊ້ໃນແຕ່ລະໄລຍະ. ສ່ວນລະບຽບການກ່ຽວກັບຄ່າແຮງງານ ແມ່ນກະຊວງຍຸຕິທຳ ເປັນຜູ້ຄົ້ນຄວ້າສະເໜີຕໍ່ລັດຖະບານພິຈາລະນາຮັບຮອງ ແຕ່ພາກປະຕິບັດຕົວຈິງຍັງແມ່ນຄູ່ກໍລະນີ ແລະ ກຳມະການຕົກລົງຢູ່ໃນລະດັບທີ່ສົມເຫດສົມຜົນ ແລະ ຕ້ອງແຈ້ງໃຫ້ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນແກ້ໄຂຂໍ້ຂັດແຍ່ງນັ້ນຮັບຮູ້ນຳ.

**ຕົວຢ່າງ:** ກ ແລະ ຂ ເປັນຄູ່ກໍລະນີທີ່ຂັດແຍ່ງກັນ ຊຶ່ງໄດ້ຍື່ນຄຳຮ້ອງຂໍມາຫາສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອດຳເນີນການໄກ່ເກ່ຍ ຫຼື ຕັດສີນ ໂດຍກຳມະການ ຫຼື ຄະນະກຳມະການ ຕາມຂັ້ນຕອນຂອງກົດໝາຍ. ສ່ວນຄ່າແຮງງານນັ້ນຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ, ຜູ້ຕັດສີນ ຫຼື ຄະນະກຳມະການຕັດສີນ ແມ່ນມີການຕົກລົງກັບຄູ່ກໍລະນີເລີຍວ່າຈະເກັບຄ່າແຮງງານເທົ່າໃດຈຶ່ງສົມເຫດສົມຜົນ. ຫຼັງຈາກນັ້ນ, ກໍແຈ້ງໃຫ້ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຮູ້ນຳກ່ຽວກັບຄ່າແຮງງານ.

#### 2. ຄວາມສຳຄັນຂອງຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຄວາມສຳຄັນຫຼາຍ ຍ້ອນວ່າ ຈະໄດ້ນຳໃຊ້ເຂົ້າໃນການເຄື່ອນໄຫວການແກ້ໄຂຂໍ້ຂັດແຍ່ງ, ຖືວ່າເປັນການປະຕິບັດພັນທະຂອງຄູ່ກໍລະນີຕໍ່ລັດ. ສະນັ້ນ, ຄູ່ກໍລະນີ ຕ້ອງມອບຄ່າໃຊ້ຈ່າຍໄວ້ຢູ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກັບກຳນົດເວລາ.

#### 3. ຈຸດປະສົງຂອງການເກັບຄ່າໃຊ້ຈ່າຍ

ການເກັບຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດມີຈຸດປະສົງ ດັ່ງນີ້:

+ ປະກອບສ່ວນສ້າງລາຍຮັບທາງດ້ານວິຊາການ ແລະ ປະຕິບັດພັນທະຂອງຄູ່ກໍລະນີ ເຂົ້າງົບປະມານຂອງລັດ;

+ ອໍານວຍຄວາມສະດວກໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

+ ຕອບແທນຄ່າແຮງງານໃຫ້ແກ່ຜູ້ໄກ່ເກ່ຍ, ຜູ້ຕັດສິນ, ຜູ້ແປພາສາ ແລະ ຊ່ຽວຊານ ທີ່ດໍາເນີນການແກ້ໄຂຂໍ້ຂັດແຍ່ງໃຫ້ຄູ່ກໍລະນີ.

## II. ປະເພດຄ່າໃຊ້ຈ່າຍ

ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

- ຄ່າທໍານຽມ;
- ຄ່າບໍລິການ;
- ຄ່າແຮງງານ.

### 1. ຄ່າທໍານຽມ

- **ຄວາມໝາຍຄ່າທໍານຽມ**

ຄ່າທໍານຽມ ແມ່ນພັນທະທາງກົງ ໃນການເກັບຄ່າສິດຄຸ້ມຄອງບໍລິຫານຂອງລັດ ຈາກຄູ່ກໍລະນີ.ໃນການໄກ່ເກ່ຍນັ້ນ ໃຫ້ຄູ່ກໍລະນີ ຈ່າຍຄ່າທໍານຽມຄົນລະເຄິ່ງ ກ່ອນການດໍາເນີນການໄກ່ເກ່ຍຂໍ້ຂັດແຍ່ງ ເວັ້ນເສຍແຕ່ໄດ້ຕົກລົງກັນໄວ້ຢ່າງອື່ນ. ສໍາລັບການຕັດສິນນັ້ນ ໃຫ້ຄູ່ກໍລະນີຮັບຜິດຊອບຈ່າຍຄ່າທໍານຽມ ຕາມທີ່ໄດ້ກໍານົດໄວ້ໃນຄໍາຕັດສິນ. ອັດຕາການເກັບຄ່າທໍານຽມ ໃຫ້ປະຕິບັດຕາມລະບຽບການທີ່ລັດປະກາດໃຊ້ໃນແຕ່ລະໄລຍະ.

ໃບເກັບຄ່າທໍານຽມ ແມ່ນນໍາໃຊ້ເພື່ອເກັບຄ່າສິດຄຸ້ມຄອງບໍລິຫານຂອງລັດຈາກບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງສັງຄົມຂັ້ນຕ່າງໆ ທີ່ເຄື່ອນໄຫວທາງດ້ານເສດຖະກິດ ແລະ ສັງຄົມ ໂດຍຜ່ານການບໍລິການຂອງລັດ,ຈາກການຢັ້ງຢືນ ແລະ ການອະນຸຍາດກ່ຽວກັບວຽກງານຕ່າງໆ ເພື່ອປະກອບສ່ວນໂດຍກົງເຂົ້າງົບປະມານຂອງລັດ.

- **ລະບຽບການເກັບຄ່າທໍານຽມ**

ການເກັບຄ່າທໍານຽມໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນປະຕິບັດຕາມລະບຽບການເກັບຄ່າທໍານຽມ ທີ່ປະກາດໃຊ້ໃນແຕ່ລະໄລຍະ ຊຶ່ງໃນປັດຈຸບັນ ແມ່ນໄດ້ປະຕິບັດດັ່ງລຸ່ມນີ້[1].

| ລ/ດ | ເນື້ອໃນ | ກີບ/ຂໍ້ຂັດແຍ່ງ |
|---|---|---|
| 1 | ມູນຄ່າແຕ່ 50.000.000 ກີບລົງມາ | 200.000 |
| 2 | ຫຼາຍກວ່າ 5.000.000-100.000.000 ກີບ | 300.000 |
| 3 | ຫຼາຍກວ່າ 100.000.000-500.000.000 ກີບ | 500.000 |
| 4 | ຫຼາຍກວ່າ 500.000.000-1.000.000.000 ກີບ | 1.000.000 |
| 5 | ຫຼາຍກວ່າ 1.000.000.000 ກີບ | 2.000.000 |

- **ຄວາມຮັບຜິດຊອບໃນການເກັບ ແລະ ຈ່າຍຄ່າທໍານຽມ**

[1] ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012

ຄ່າທຳນຽມໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນຜູ້ເກັບເອງໃນເວລາທີ່ຄູ່ກໍລະນີມີການຕົກລົງໃຫ້ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນ. ໝາຍຄວາມວ່າ ຫຼັງຈາກຄູ່ກໍລະນີຕົກລົງກັນວ່າຈະນຳເອົາຂໍ້ຂັດແຍ່ງດັ່ງກ່າວນັ້ນມາແກ້ໄຂຢູ່ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໂດຍມີຄຳຮ້ອງ ແລະ ຄຳແກ້ຄຳຮ້ອງຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ. ການເກັບຄ່າທຳນຽມໃນການໄກ່ເກ່ຍ ແລະ ການຕັດສິນນັ້ນ ຕ້ອງມີການບັນທຶກ ແລະ ໃບຮັບເງິນ ພ້ອມທັງລົງລາຍເຊັນຜູ້ຮັບ-ຜູ້ຈ່າຍໄວ້ຄັກແນ່ ເພື່ອເປັນການລາຍງານ, ການຄຸ້ມຄອງ ແລະ ກວດກາ ໃຫ້ຖືກຕ້ອງຄົບຖ້ວນແລ້ວມອບເຂົ້າງົບປະມານແຫ່ງລັດ.

ຄູ່ກໍລະນີເປັນຜູ້ຮັບຜິດຊອບຈ່າຍຄ່າທຳນຽມ ຫຼື ຄູ່ກໍລະນີ ທັງສອງຝ່າຍ ສາມາດຕົກລົງກັນຈ່າຍຜູ້ລະເຄິ່ງກ່ອນການດຳເນີນການແກ້ໄຂຂໍ້ຂັດແຍ່ງ ຕາມມູນຄ່າຂອງຂໍ້ຂັດແຍ່ງທີ່ສະເໜີໃຫ້ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແກ້ໄຂ ສຳລັບກໍລະນີການແກ້ໄຂດ້ວຍການໄກ່ເກ່ຍ. ສ່ວນກໍລະນີທີ່ຄູ່ກໍລະນີເລືອກນຳໃຊ້ຮູບການຕັດສິນ ໂດຍທົ່ວໄປແລ້ວ ແມ່ນຄູ່ກໍລະນີຝ່າຍທີ່ຍື່ນຄຳຮ້ອງຈະເປັນຜູ້ຈ່າຍຄ່າທຳນຽມກ່ອນຕາມຈຳນວນທີ່ໄດ້ກຳນົດໄວ້ຕາມລະບຽບການ ຫຼັງຈາກມີຜົນການຕັດສິນຂອງຄະນະກຳມະການຕັດສິນ ແມ່ນໃຫ້ປະຕິບັດຕາມຄວາມຮັບຜິດຊອບໃນການຈ່າຍຄ່າທຳນຽມ ທີ່ໄດ້ລະບຸໄວ້ໃນຄຳຕັດສິນຂອງຄະນະກຳມະການຕັດສິນ.

**2. ຄ່າບໍລິການ**

- **ຄວາມໝາຍ**

ຄ່າບໍລິການ ແມ່ນການເກັບຄ່າບໍລິການວຽກງານທາງດ້ານບໍລິຫານວິຊາການ ຈາກຄູ່ກໍລະນີ.

ການເກັບຄ່າບໍລິການ ໃຫ້ປະຕິບັດຕາມລະບຽບການທີ່ລັດປະກາດໃຊ້ໃນແຕ່ລະໄລຍະ ຊຶ່ງຜູ້ຮ້ອງຂໍເປັນຜູ້ຮັບຜິດຊອບຈ່າຍກ່ອນ.

ຄ່າບໍລິການໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຄ່າໃຊ້ຈ່າຍທີ່ຄູ່ກໍລະນີຝ່າຍຮ້ອງຂໍ ຕ້ອງໄດ້ນຳມາວາງໄວ້ຢູ່ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນເວລາຍື່ນຄຳຮ້ອງຂໍ ເພື່ອນຳໃຊ້ເຂົ້າໃນການໄກ່ເກ່ຍ ຫຼື ການຕັດສິນ ເຊັ່ນ ສົ່ງໝາຍເຊີນ, ສຳເນົາເອກະສານ, ຈັດປະຊຸມ ແລະ ອື່ນໆ.

ໃບເກັບເງິນຄ່າບໍລິການ ແມ່ນນຳໃຊ້ເພື່ອເກັບຄ່າບໍລິການຮັບໃຊ້ທາງດ້ານບໍລິການວິຊາການຈາກຂະແໜງການຂອງລັດໃນການເຄື່ອນໄຫວຮັບໃຊ້ສັງຄົມໂດຍບໍ່ຫວັງຜົນກຳໄລ ແລະ ເປັນຄ່າທົດແທນຈາກການໃຫ້ບໍລິການຂອງລັດຕໍ່ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງສັງຄົມຂັ້ນຕ່າງໆ ດ້ວຍການນຳໃຊ້ແຮງງານ, ສະຕິປັນຍາ ແລະ ວັດຖຸອຸປະກອນ ເພື່ອຊ່ວຍໜູນການນຳໃຊ້ງົບປະມານຂອງລັດໂດຍຜ່ານການເກັບ, ທົດແທນ ແລະ ການແບ່ງສ່ວນເຂົ້າງົບປະມານແຫ່ງລັດ.

- **ລະບຽບການເກັບຄ່າບໍລິການ**

ການເກັບຄ່າບໍລິການ ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍວິທີການໄກ່ເກ່ຍ ຫຼື ດ້ວຍການຕັດສິນແມ່ນເກັບຕາມລະບຽບການກ່ຽວກັບຄ່າບໍລິການທີ່ປະກາດໃຊ້ໃນແຕ່ລະໄລຍະ. ສ່ວນອັດຕາຄ່າບໍລິການໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໃນປັດຈຸບັນ ເກັບໃນອັດຕາ 150.000 ກີບ ຕໍ່ 1 ຂໍ້ຂັດແຍ່ງ.

- **ຄວາມຮັບຜິດຊອບໃນການເກັບ ແລະ ຈ່າຍຄ່າບໍລິການ**

ການເກັບຄ່າບໍລິການໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຄວາມຮັບຜິດຊອບຂອງ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນຜູ້ເກັບນຳຄູ່ກໍລະນີຝ່າຍທີ່ຮ້ອງຂໍໃນເວລາທີ່ມາຍື່ນຄຳຮ້ອງຢູ່ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ຫຼັງຈາກນັ້ນການບັນທຶກ ແລະ ອອກໃບຮັບເງິນພ້ອມທັງລົງລາຍເຊັນຜູ້ຮັບ-ຜູ້ຈ່າຍ ເພື່ອເປັນຫຼັກຖານທີ່ນຳໃຊ້ເຂົ້າໃນການລາຍງານ, ການຄຸ້ມຄອງ ແລະ ກວດກາໃຫ້ຖືກຕ້ອງຄົບຖ້ວນ.

ຄ່າບໍລິການໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຜູ້ຮ້ອງຂໍ ຈ່າຍກ່ອນໃນເວລາຍື່ນຄຳຮ້ອງ. ພາຍຫຼັງຄະນະກຳມະການຕັດສິນໄດ້ມີຄຳຕັດສິນອອກມາແລ້ວ ການຈ່າຍຄ່າບໍລິການ ແມ່ນໃຫ້ປະຕິບັດຕາມຄຳຕັດສິນ. ສ່ວນການໄກ່ເກ່ຍ ແມ່ນອີງຕາມຜົນຂອງການໄກ່ເກ່ຍ.

## 3. ຄ່າແຮງງານ

- **ຄວາມໝາຍ**

ຄ່າແຮງງານ ແມ່ນຄ່າຕອບແທນໃນການເຄື່ອນໄຫວວຽກງານ ຂອງຜູ້ໄກ່ເກ່ຍ, ຜູ້ຕັດສິນ, ຊ່ຽວຊານ ຫຼື ຜູ້ຊຳນານງານ. ຄ່າແຮງງານ ຕ້ອງຊຳລະຢູ່ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນຮ້ອງຂໍນັ້ນ ແລະ ຕ້ອງມີບົດບັນທຶກໄວ້ເປັນຫຼັກຖານ. ລະບຽບການກ່ຽວກັບຄ່າແຮງງານ ແມ່ນກະຊວງຍຸຕິທຳ ເປັນຜູ້ຄົ້ນຄວ້າສະເໜີຕໍ່ລັດຖະບານພິຈາລະນາຮັບຮອງ.

- **ລະບຽບການເກັບຄ່າແຮງງານ**

ລະບຽບການກ່ຽວກັບການເກັບຄ່າແຮງງານໃນກົດໝາຍລາວ ໄດ້ລະບຸໄວ້: “ ລະບຽບການກ່ຽວກັບຄ່າແຮງງານແມ່ນກະຊວງຍຸຕິທຳ ເປັນຜູ້ຄົ້ນຄວ້າສະເໜີຕໍ່ ລັດຖະບານ ພິຈາລະນາຮັບຮອງ ”[2] ປັດຈຸບັນກະຊວງຍຸຕິທຳ ກຳລັງຮ່າງລະບຽບການດັ່ງກ່າວ ເພື່ອສະເໜີຕໍ່ລັດຖະບານພິຈາລະນາຮັບຮອງ. ດັ່ງນັ້ນ, ການເກັບຄ່າແຮງງານ ແມ່ນຄູ່ກໍລະນີເປັນຜູ້ຕົກລົງກັບຜູ້ໄກ່ເກ່ຍ, ຜູ້ຕັດສິນ ຫຼື ຜູ້ຊ່ຽວຊານ ແລ້ວແຈ້ງໃຫ້ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນດຳເນີນການແກ້ໄຂຂໍ້ຂັດແຍ່ງນັ້ນຊາບຢ່າງເປັນລາຍລັກອັກສອນ.

ການເກັບຄ່າແຮງງານໃນພາກປະຕິບັດຕົວຈິງແລ້ວແມ່ນປະຕິບັດດັ່ງນີ້:

1) ໃນກໍລະນີເລືອກຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນໜຶ່ງຄົນ, ຄູ່ກໍລະນີຕົກລົງກັບຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ກ່ຽວກັບຄ່າແຮງງານແລ້ວແຈ້ງໃຫ້ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນແກ້ໄຂຂໍ້ຂັດແຍ່ງຊາບ. ການຈ່າຍຄ່າແຮງງານໃຫ້ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ, ຖ້າຄູ່ກໍລະນີ ບໍ່ໄດ້ຕົກລົງກັນໄວ້ຢ່າງອື່ນ ໃຫ້ຄູ່ກໍລະນີຈ່າຍຝ່າຍລະເຄິ່ງ ແລະ ຈ່າຍໄວ້ຢູ່ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເກັບຮັກສາໄວ້ ຫຼັງຈາກທີ່ໄດ້ໄກ່ເກ່ຍ ຫຼື ຕັດສິນ ສຳເລັດແລ້ວ ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຈຶ່ງຈະໄດ້ຮັບເງິນດັ່ງກ່າວ.

2) ໃນກໍລະນີເລືອກເອົາຜູ້ໄກ່ເກ່ຍສອງຄົນ, ຄູ່ກໍລະນີແຕ່ລະຝ່າຍ ເປັນຜູ້ຕົກລົງຄ່າແຮງງານກັບຜູ້ໄກ່ເກ່ຍ ທີ່ຕົນເລືອກ. ຫຼັງຈາກນັ້ນ, ໃຫ້ຄູ່ກໍລະນີຈ່າຍຢູ່ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງ

[2] ມາດຕາ 57 ວັກ 3 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງ ປີ 2018

ດ້ານເສດຖະກິດ ເກັບຮັກສາໄວ້. ຫຼັງຈາກທີ່ຂໍ້ຂັດແຍ່ງໄດ້ຮັບການພິຈາລະນາແກ້ໄຂສິ້ນສຸດແລ້ວ ຜູ້ໄກ່ເກ່ຍ ຈຶ່ງຈະໄດ້ຮັບເງິນດັ່ງກ່າວ.

3) ໃນກໍລະນີເລືອກເອົາຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ສາມຄົນ, ຄູ່ກໍລະນີແຕ່ລະຝ່າຍ ເປັນຜູ້ຕົກລົງຄ່າແຮງງານກັບຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ທີ່ຕົນເອງເລືອກ ( ໝາຍຄວາມວ່າຕ່າງຝ່າຍຕ່າງຮັບຜິດຊອບຕໍ່ບຸກຄົນທີ່ຕົນເລືອກ ) ເພື່ອໃຫ້ມາແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕົນ ແລະ ໃຫ້ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ທີ່ຄູ່ກໍລະນີ ໄດ້ເລືອກໄວ້ນັ້ນ ຕົກລົງກ່ຽວກັບຄ່າແຮງງານກັບປະທານຄະນະກຳມະການໄກ່ເກ່ຍ ຫຼື ປະທານຄະນະກຳມະການຕັດສິນ. ໃຫ້ຄູ່ກໍລະນີຈ່າຍຢູ່ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເກັບຮັກສາໄວ້ ຫຼັງຈາກທີ່ຂໍ້ຂັດແຍ່ງໄດ້ຮັບການພິຈາລະນາແກ້ໄຂສິ້ນສຸດແລ້ວ ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຈຶ່ງຈະໄດ້ຮັບເງິນດັ່ງກ່າວ.

## III. ຄວາມຮັບຜິດຊອບໃນການເກັບ, ຈ່າຍຄ່າແຮງງານ ແລະ ການຄຸ້ມຄອງຄ່າໃຊ້ຈ່າຍ

ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນດຳເນີນການແກ້ໄຂຂໍ້ຂັດແຍ່ງ ເປັນຜູ້ຮັບຜິດຊອບຄ່າແຮງງານ ພາຍໃນກຳນົດສິບຫ້າວັນ ພາຍຫຼັງທີ່ມີການແຕ່ງຕັ້ງຜູ້ໄກ່ເກ່ຍ, ຄະນະກຳມະການຕັດສິນ ຫຼື ຜູ້ຊ່ຽວຊານ. ຈາກນັ້ນ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກໍຈະອອກເອກະສານຢັ້ງຢືນອອກໃບຮັບເງິນໃຫ້ຄູ່ກໍລະນີ. ເມື່ອການໄກ່ເກ່ຍ ຫຼື ຕັດສິນສຳເລັດແລ້ວ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈຶ່ງຈະມອບຄ່າແຮງງານດັ່ງກ່າວ ໃຫ້ຜູ້ໄກ່ເກ່ຍ, ກຳມະການຕັດສິນ ຫຼື ຜູ້ຊ່ຽວຊານ ດ້ວຍການອອກໃບມອບເງິນ.

ຄູ່ກໍລະນີຕ້ອງຮັບຜິດຊອບຄ່າແຮງງານຕາມການຕົກລົງ ໃຫ້ຜູ້ໄກ່ເກ່ຍ ຫຼື ກຳມະການຕັດສິນເອງ ແລະ ນຳເອົາຄ່າແຮງງານດັ່ງກ່າວ ໄປມອບໃຫ້ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນແກ້ໄຂຂໍ້ຂັດແຍ່ງນັ້ນໄວ້ກ່ອນການດຳເນີນການແກ້ໄຂຂໍ້ຂັດແຍ່ງພາຍໃນກຳນົດສິບຫ້າວັນ ຫຼື ພາຍຫຼັງທີ່ມີການແຕ່ງຕັ້ງ ເພື່ອເປັນການຮັບປະກັນໃນການຈ່າຍຄ່າແຮງງານດັ່ງກ່າວ.

**ຕາຕະລາງກ່ຽວກັບຄ່າໃຊ້ຈ່າຍໃນການດຳເນີນການໄກ່ເກ່ຍ ແລະ ການຕັດສິນ**

| ລ/ດ | ການຈ່າຍ | ປະກອບຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ | | | | | |
|---|---|---|---|---|---|---|---|
| | | ຄ່າທຳນຽມ | | ຄ່າບໍລິການ | | ຄ່າແຮງງານ | |
| | | ການໄກ່ເກ່ຍ | ການຕັດສິນ | ການໄກ່ເກ່ຍ | ການຕັດສິນ | ການໄກ່ເກ່ຍ | ການຕັດສິນ |
| 1 | ຜູ້ຈ່າຍ | ຜູ້ຍື່ນຄຳຮ້ອງ | ຜູ້ຍື່ນຄຳຮ້ອງ | ຜູ້ຍື່ນຄຳຮ້ອງ | ຜູ້ຍື່ນຄຳຮ້ອງ | ຕາມການຕົກລົງ ຫຼື ຝ່າຍລະເຄິ່ງ | ຄູ່ກໍລະນີແຕ່ລະຝ່າຍຕົກລົງກັບກຳມະການທີ່ຕົນເອງເລືອກ |
| 2 | ເວລາ | ກ່ອນການດຳເນີນ | ກ່ອນການດຳເນີນ | ເວລາຍື່ນຄຳຮ້ອງ | ເວລາຍື່ນຄຳຮ້ອງ | ກ່ອນການດຳເນີນການ | ກ່ອນການດຳເນີນການ |

| | | | | | | | |
|---|---|---|---|---|---|---|---|
| | | | | | | ໄກ່ເກ່ຍ 15 ວັນພາຍຫຼັງແຕ່ງຕັ້ງ | ຕັດສິນ 15 ວັນພາຍຫຼັງແຕ່ງຕັ້ງ |
| 3 | ສະຖານທີ່ | ຢູ່ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງ | ຢູ່ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງ | ຢູ່ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງ | ຢູ່ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງ | ຢູ່ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງ | ຢູ່ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງ |
| 4 | ມູນຄ່າ | ຕາມອັດຕາສ່ວນທີ່ກຳນົດໄວ້ໃນລະບຽບການ | ຕາມອັດຕາສ່ວນທີ່ກຳນົດໄວ້ໃນລະບຽບການ | 150.000ກີບ | 150.000ກີບ | ຕາມການຕົກລົງຂອງຄູ່ກໍລະນີ ແລະ ຜູ້ໄກ່ເກ່ຍ | ຕາມການຕົກລົງຂອງຄູ່ກໍລະນີ ແລະ ກຳມະການຕັດສິນ |
| 5 | ຜູ້ຮັບຜິດຊອບ | ຈ່າຍຝ່າຍລະເຄິ່ງ ຫຼື ຕາມຜົນການໄກ່ເກ່ຍ | ຕາມຄຳຕັດສິນ | ຕາມການຕົກລົງ | ຕາມຄຳຕັດສິນ | ແຕ່ລະຝ່າຍຮັບຜິດຊອບເອງ | ແຕ່ລະຝ່າຍຮັບຜິດຊອບເອງ |
| 6 | ຂໍ້ມູນອ້າງອີງ | ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 54 ແລະ ລັດຖະດຳລັດຂອງປະທານປະເທດສະບັບເລກທີ່003 /ປປທ ລົງວັນທີ26/12/2012 ມາດຕາ 92 | ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 54 ແລະ ລັດຖະດຳລັດຂອງປະທານປະເທດສະບັບເລກທີ່003 /ປປທ ລົງວັນທີ26/12/2012 ມາດຕາ 92 | ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 54 ແລະ ລັດຖະດຳລັດຂອງປະທານປະເທດສະບັບເລກທີ່ 003 /ປປທ ລົງວັນທີ26/12/2012 ມາດຕາ 92 | ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 54 ແລະ ລັດຖະດຳລັດຂອງປະທານປະເທດສະບັບເລກທີ່ 003 /ປ ປທ ລົງວັນທີ26/12/2012 ມາດຕາ 92 | ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດຕາ 56 | ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາດ ຕາ 56 |

ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຕ້ອງຈ່າຍອາກອນລາຍໄດ້ ເຂົ້າງົບປະມານຂອງ ຕາມລະບຽບການ ຊຶ່ງ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນແກ້ໄຂນັ້ນຈະເປັນຜູ້ຮັບຜິດຊອບເກັບ.

ອາກອນລາຍໄດ້ ຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ແມ່ນລາຍຮັບຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ອັນເນື່ອງຈາກການປະຕິບັດໜ້າທີ່ວຽກງານໃນການໃຫ້ບໍລິການແກ່ຄູ່ກໍລະນີຂັດແຍ່ງທາງດ້ານເສດຖະກິດ ຊຶ່ງຕ້ອງມີພັນທະໃນການການເສຍອາກອນລາຍໄດ້ ຕາມການກຳນົດຂອງກົດໝາຍ.

- **ການຄຸ້ມຄອງຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ສູນແກ້ໄຂຂໍ້ຂັດແຍ່ງທາງດ້ນເສດຖະກິດ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນຜູ້ຄຸ້ມຄອງຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ພາຍຫຼັງເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າແຮງງານ ແລະ ອາກອນລາຍໄດ້ ໃນແຕ່ລະໄລຍະແລ້ວ ແມ່ນຈະມອບເຂົ້າງົບປະມານຂອງລັດ ຕາມລະບຽບການ.

**References:**


1. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ, ສະບັບເລກທີ 52/ສພຊ, ລົງວັນທີ 22/6/2018.
2. ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບປີ 2015.
3. ກົດຈັນຍາບັນຂອງທະນາຍຄວາມ,ເລກທີ 635/ກຍ, ລົງວັນທີ 2 ພະຈິກ 2012.
4. ດຳລັດວ່າດ້ວຍຈັນຍາບັນຂອງພະນັກງານ-ລັດຖະກອນ ສະບັບປີ 2017.
5. ດຳລັດວ່າດ້ວຍຈັນຍາບັນຂອງພະນັກງານ-ລັດຖະກອນ, ສະບັບເລກທີ 184/ລບ, ລົງວັນທີ 26/06/2019.
6. ປະມວນເອກະສານຝຶກອົບຮົມທັກສະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ, ການຕັດສິນໂດຍກຳມະການ, ປີ 2020.
7. ປື້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ປີ 2017.
8. ແຈ້ງການແນະນຳກ່ຽວກັບການຈັດຕັ້ງປະຕິບັດການນຳໃຊ້ໃບເກັບເງິນຄ່າທຳນຽມ ແລະ ຄ່າບໍລິການ ຂອງຫ້ອງການ, ກະຊວງການເງິນ ເລກທີ 0849/ ກງ.ຫກ, ລົງວັນທີ 08 APR 2009 ຂໍ້ I ວັກ 2.
9. ລັດຖະບັນຍັດຂອງປະທານປະເທດສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ວ່າດ້ວຍການເກັບຄ່າທຳນຽມ ແລະ ຄ່າບໍລິການ.